P_big88@PDE-04.10.2017

สาทาละบะลัด ปะຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານປົກຄອງແຂວງຄຳມ່ວນ — ເລກທີ...1917.../ຈຂ/ຄມ

ຄຳມ່ວນ, ວັນທີ ...10... ຕຸລາ 2017

# ຂໍ້ຕົກລົງ

## ຂອງເຈົ້າແຂວງໆ ຄຳມ່ວນ

## ວ່າດ້ວຍ ການເກັບຄ່າທຳນຽມ, ຄ່າບໍລິການ ແລະ ຄ່າລ່ວງເວລາ ໃນການ ເຂົ້າ-ອອກ ດ່ານສາກົນປະຈຳແຂວງຄຳມ່ວນ ຜ່ານລະບົບປະຕູດຽວ

- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.
- ອີງຕາມ ລັດຖະບັນຍັດຂອງປະທານປະເທດ ແຫ່ງ ສປປ ລາວ ສະບັບເລກທີ 003/ປປທ, ລົງວັນທີ 26 ທັນວາ 2012.
- ອີງຕາມ ຂໍ້ຕົກລົງ ຂອງເຈົ້າແຂວງໆ ຄຳມ່ວນ ວ່າດ້ວຍການແຕ່ງຕັ້ງຄະນະຄົ້ນຄວ້າ ແລະ ວາງແຜນເສດຖະກິດຂອງແຂວງ ສະບັບເລກທີ 2174 /ຈຂ/ຄມ, ລົງວັນທີ 27 ຕຸລາ 2016.
- ອີງຕາມ ບົດບັນທຶກກອງປະຊຸມ ກ່ຽວກັບການເກັບຄ່າທຳນຽມ, ຄ່າບໍລິການ ແລະ ຄ່າລ່ວງເວລາ ຜ່ານດ່ານສາກົນຂົວມິດຕະພາບ 3 ແລະ ດ່ານສາກົນນາເພົ້າ ຄັ້ງວັນທີ 29 ກັນຍາ 2017.

**ເຈົ້າແຂວງໆ ຄຳມ່ວນ ຕົກລົງ:**

**ມາດຕາ 01 :** ອະນຸມັດການເກັບຄ່າທຳນຽມ, ຄ່າບໍລິການ ແລະ ຄ່າລ່ວງເວລາ ໃນການ ເຂົ້າ-ອອກ ດ່ານສາກົນປະຈຳແຂວງຄຳມ່ວນ ຜ່ານລະບົບປະຕູດຽວ.

**ມາດຕາ 02:** ມອບໃຫ້ກອງບັນຊາການ ປກສ ແຂວງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ຄະນະດ່ານພາສີສາກົນປະຈຳແຂວງ, ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

**ມາດຕາ 03:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດຫລັງຈາກລົງລາຍເຊັນ 15 ວັນລັດຖະການ ແລະ ລົງໃນເວບໄຊຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

ເຈົ້າແຂວງໆ ຄຳມ່ວນ

ແຂວງຄຳມ່ວນ — ເຈົ້າແຂວງ

ໂອໄດ ສຸດາພອນ

+ ບ່ອນນຳສົ່ງ:

| | |
|---|---|
| - ຮອງເຈົ້າແຂວງ ທ່ານລະ | 01 ສະບັບ. |
| - ກອງບັນຊາການ ປກສ ແຂວງ | 01 ສະບັບ. |
| - ພະແນກການຕ່າງປະເທດແຂວງ | 01 ສະບັບ. |
| - ຂະແໜງການກ່ຽວຂ້ອງປະຈຳດ່ານສາກົນ | 01 ສະບັບ. |
| - ເກັບມ້ຽນ | 01 ສະບັບ. |